ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 153 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 19 MAR 2007

# ຂໍ້ຕົກລົງ

## ວ່າດ້ວຍ ການປະຕິບັດນະໂຍບາຍອຸດໜູນຄ່າທີ່ພັກອາໄສ ໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມຂໍ້ຕົກລົງວ່າດ້ວຍ ລະບຽບການຢູ່ເຮືອນລວມຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 479/ທຫລ ລົງວັນທີ 28 ພະຈິກ 2006;
- ອີງຕາມການເຫັນດີເປັນເອກະພາບຂອງກອງປະຊຸມຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 07 ມີນາ 2007.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ :

<u>ມາດຕາ 1 :</u> ປະຕິບັດນະໂຍບາຍອຸດໜູນຄ່າທີ່ພັກອາໄສໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ ເພື່ອເປັນການແກ້ໄຂທາງດ້ານທີ່ພັກອາໄສຂອງພະນັກງານຕາມຕຳແໜ່ງງານ ດັ່ງລຸ່ມນີ້ :

| | | |
|---|---|---|
| 1. | ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ | 200.000 ກີບ / ຄົນ / ເດືອນ |
| 2. | ຮອງເລຂາຄະນະພັກ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ | 180.000 ກີບ / ຄົນ / ເດືອນ |
| 3. | ຄະນະພັກທະນາຄານແຫ່ງ ສປປ ລາວ | 160.000 ກີບ / ຄົນ / ເດືອນ |
| 4. | ຄະນະກົມ ແລະທຽບເທົ່າ | 140.000 ກີບ / ຄົນ / ເດືອນ |
| 5. | ຄະນະພະແນກ ແລະທຽບເທົ່າ | 120.000 ກີບ / ຄົນ / ເດືອນ |
| 6. | ລັດຖະກອນສົມບູນ ແລະພະນັກງານບຳນານ | 100.000 ກີບ / ຄົນ / ເດືອນ |

ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຢອນເຄ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະເລກ: 4304 BNL VTE LS ໂທລະສານ: (856)-21 21 3108 ໂທລະສັບ: 213109-213110 E-mail:Bol@pan-laos.net.la

ສຳລັບຜູ້ທີ່ຄວບຕຳແໜ່ງທັງສາຍພັກ ແລະສາຍລັດ ຫຼື ຮັບຜິດຊອບຫຼາຍວຽກງານ ຕາມການແຕ່ງຕັ້ງ ແມ່ນໃຫ້ປະຕິບັດຕາມຕຳແໜ່ງທີ່ສູງສຸດ.

<u>ມາດຕາ 2 :</u> ຫ້ອງການ, ກົມຈັດຕັ້ງ-ພະນັກງານ, ບັນດາສາຂາ ແລະທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ແລະຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

<u>ມາດຕາ 3 :</u> ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ ເດືອນ 03 / 2007 ເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ.ລ ★ ຜູ້ວ່າການ ★

ພູເພັດ ຄຳພູນວົງ